

ຊຸດມໍລະດົກວຽງຈັນ

# ສັງສິນໄຊ

ຄໍາກອນ ຄູ່ ຮ້ອຍແກ້ວ

ໂດຍ ທ້າວປາງຄໍາ

ຊຸດ ມໍລະດົກວຽງຈັນ

# ສັງສິນໄຊ

ເຫຼັ້ມ ໔

## ຄຳກອນຄູ່ຮ້ອຍແກ້ວ

(ບັ້ນ 10 - 15)

ໂດຍ **ທ້າວປາງຄຳ**

ນັກປະພັນເອກ ແຫ່ງກຸງສີສັດຕະນາຄະນະຫຸດວຽງຈັນ

(ພ.ສ. 2193)

ລິດຈະນາ ແລະແປເປັນຮ້ອຍແກ້ວ

ໂດຍ **ສີລາ ວີຣະວົງ**

ຊື່ປື້ມ: **ສັງສິນໄຊ ຄຳກອນ ຄູ່ ຮ້ອຍແກ້ວ ເຫຼັ້ມ ໒** (ບັ້ນ 10 - 15)

ປະພັນຄຳກອນ ໂດຍ: ທ້າວປາງຄຳ ນັກປະພັນເອກແຫ່ງກຸງສີສັດຕະນາຄະນະຫຸດວຽງຈັນ ພຸດທະສັກກະລາດ 22 (ພ.ສ. 2193)

ແປເປັນຮ້ອຍແກ້ວ ໂດຍ: ມະຫາສີລາ ວີຣະວົງ

ບັນນາທິການ: ດາລາ ວີຣະວົງ ກັບລະຍາ

ອ່ານພິສູດອັກສອນ: ດວງເດືອນ ບຸນຍາວົງ

ຮູບປະກອບ: ກົງພັດ ຫຼວງລາດ

ຮູບໜ້າປົກ: ຮູບແຕ້ມຝາຜະໜັງສິມວັດສີສະເກດ

ພິມດີດ ຈັດໜ້າ: ຄຳມັກ ວົງສັກດາ

ອອກແບບປົກ: ບໍລິສັດ ດອກເກດ ຈັດພິມຈຳກັດ

ຈັດພິມໂດຍ: ແລະ

ອຸປະຖຳໂດຍ: Canon M-Point Mart

ພິມທີ່: ພະໄຊ ກຣາບຟິກ

ຕາມທະບຽນ: 343 ພຈ 19102011

ຈຳນວນ 3,500 ຫົວ

ພິມຄັ້ງທີ 1, ຕຸລາ 2011, ນະຄອນຫລວງວຽງຈັນ, ສ.ປ.ປ.ລາວ

© ສະຫງວນລິຂະສິດ 2009 ໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແລະບໍລິສັດ ດອກເກດຈັດພິມ

ຫ້າມນຳເອົາເນື້ອໃນ ໃນປື້ມເຫຼັ້ມນີ້ໄປໃຊ້ເພື່ອການທຸລະກິດ ສ້າງຜົນກຳໄລ ຫຼືຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຈັດພິມ. ຖ້າຕ້ອງການນຳໃຊ້ເພື່ອການສຶກສາ, ເປັນເອກະສານອ້າງອີງ, ປະກອບບົດຄົ້ນຄວ້າ ແລະເອົາໃສ່ໃນເວບໄຊ ແລະສື່ໃນຮູບແບບອື່ນໆ ຈົ່ງອ້າງອີງ ຊື່ປື້ມ ຊື່ຜູ່ແຕ່ງ ຜູ່ລິຈະນາ ຜູ່ຈັດພິມ ແລະປີ ທີ່ຈັດພິມ.

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ປາງຄຳ, ທ້າວ

ສັງສິນໄຊ ຄຳກອນ ຄູ່ ຮ້ອຍແກ້ວ ເຫຼັ້ມ 2 (ບັ້ນ 10-15)/ ທ້າວປາງຄຳ, ລິຈະນາ ແລະແປເປັນຮ້ອຍແກ້ວ ໂດຍ ມະຫາສີລາ ວີຣະວົງ. ວຽງຈັນ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ແລະສຳນັກພິມ ດອກເກດ 2011.

ກ-ມ, 230 ໜ້າ: ພາບປະກອບສີ: 24 ຊມ.

(ຊຸດມໍລະດົກວຽງຈັນ) 1. ວັນນະຄະດີລາວ. 2.ສັງສິນໄຊ. I. ສີລາ ວີຣະວົງ. II.ຊື່ຊຸດ. III.ຊື່ເລື່ອງ

895.9191--dc21

ISBN 978-9932-07-020-6

# ສາລະບານ

ພາກ **I.** ໜ້າ

ຄຳນິຍົມ ຂອງ ທ່ານ ບົວເງິນ ຊາພູວົງ
ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ .......... ກ

1. ຄຳອະທິບາຍຂອງຜູ້ຈັດພິມ : ເປັນຫຍັງຈຶ່ງພິມ ຄຳກອນຄູ່ຮ້ອຍແກ້ວ ................ ຄ
2. ຄຳອະທິບາຍ ຂອງຜູ້ລິດຈະນາ ໃນການຈັດພິມ ປີ ພ.ສ. 2512 ........................ ຊ
3. ປະຫວັດ ຂອງ ທ້າວປາງຄຳ ໂດຍ ສິລາ ວີຣະວົງ ........................ ຖ
4. ຊີວະປະຫວັດ ຂອງຜູ້ລິດຈະນາ (ມະຫາສິລາ ວີຣະວົງ) ........................ ບ
5. ໃບກຽດຕິຄຸນ ນາມມະຍົດ ສິລະປິນແຫ່ງຊາດ ແລະ ຫຼຽນກາ ........................ ຝ
6. ເຫດການສຳຄັນໃນຊີວິດຂອງ ມະຫາສິລາ ວີຣະວົງ ........................ ພ
7. ຕົວຢ່າງລາຍມືຕົ້ນສະບັບ ຄຳຮ້ອຍແກ້ວ ........................ ຢ
8. ແຜນຜັງ ........................
9. ຮູບປະກອບເຫຼັ້ມ 1 ........................

ພາກ **II.**

ຄຳກອນ ແລະ ຮ້ອຍແກ້ວ

10. ມະຫາຍຸດທະກຳບັ້ນ ........................ 1
11. ບາລະຍຸດທະກຳບັ້ນ ........................ 47
12. ມຸດຕະບັງບັ້ນ ........................ 82
13. ກາລະບັ້ນ ........................ 85
14. ຖາປະນາ ບັ້ນບາສີສະເຫວີຍລາດ ........................ 91
15. ບັ້ນນາກສະດຸ້ງ ........................ 173

ພາກ I.



# ຄຳນິຍົມ

## ທ່ານ ບົວເງິນ ຊາພູວົງ

ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ
ວັດທະນະທຳ ແລະ ທ່ອງທ່ຽວ
ສິລະປິນແຫ່ງຊາດ ສາຂາການສະແດງ ຄ.ສ. 2011

ວັນນະຄະດີຄຳກອນ ເລື່ອງ ສັງສິນໄຊ ເປັນໜຶ່ງໃນມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ທີ່ລັດຖະບານແຫ່ງ ສ.ປ.ປ. ລາວ ໄດ້ປະກາດອອກໃນກົດໝາຍວ່າດ້ວຍ ມໍລະດົກແຫ່ງຊາດ ປີ 2005 (ພາກທີ 3 ໝວດທີ 1 ມາດຕາ 18).

ປະເພນີຮີດຄອງອັນດີງາມຢ່າງໜຶ່ງຂອງລາວ ທີ່ລູກຫຼານເຄີຍສືບປະຕິບັດມາແຕ່ບູຮານະການ ແມ່ນການຮັກສາ ເສີມຂະຫຍາຍ ແລະ ນຳໃຊ້ມໍລະດົກທີ່ພໍ່ແມ່ ປູ່ຍ່າຕາຍາຍສ້າງໄວ້ໃຫ້ຢ່າງມີປະໂຫຍດ. ບັດນີ້ ພວກລູກໆຫຼານໆ ສິດສານຸສິດ ນັກວັດທະນະທຳຜູ້ສືບຮອຍຂອງ ພໍ່ມະຫາສີລາ ວີຣະວົງ, ນັກປາດລາວ ທີ່ເຄົາຣົບຮັກຂອງພວກເຮົາ ໄດ້ມີກຸສົນ ເຈດຕະນາ ຈັດພິມປື້ມຄຳກອນ ສັງສິນໄຊ ມູນມັງຮ່ວມຂອງປະຊາຊົນລາວທັງຊາດ ທີ່ບັນພະບຸລຸດ ນັກກະວີແຫ່ງກຸງສີສັດຕະນາຄະນະຫຸດ ລ້ານຊ້າງວຽງຈັນ ປະພັນໄວ້ເມື່ອເກືອບ 400 ປີ ແລ້ວນີ້ ອອກມາ, ກຸສົນລະກຳຄັ້ງນີ້ນັບວ່າສອດຄ່ອງກັບວໍລະໂອກາດທີ່ຊາວນະຄອນຫຼວງວຽງຈັນ ກໍຄືປວງຊົນລາວທັງຊາດ ພວມຟົດຟື້ນຜັນຂະຫຍາຍມະຕິໃຫຍ່ກອງປະຊຸມຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ 2011 ແລະສືບຕໍ່ສ້າງບັນຍາກາດ ແລະສ້າງສີສັນໃຫ້ແກ່ການສະເຫຼີມສະຫຼອງນະຄອນຫຼວງວຽງຈັນ ຄົບຮອບ 450 ປີ ທີ່ຜ່ານໄປແລ້ວ ພາຍໃຕ້ການນຳພາຂອງພັກ ແລະລັດຖະບານ ແຫ່ງ ສ.ປ.ປ. ລາວ.

**"ສັງສິນໄຊ ໔ ຄຳກອນ ຄູ່ ຮ້ອຍແກ້ວ"** ເຫຼັ້ມນີ້ ຖືວ່າເປັນຜົນງານສົມບູນສຸດທ້າຍທີ່ທ່ານມະຫາ ສີລາ ວີຣະວົງ ສິລະປິນແຫ່ງຊາດ ສາຂາວັນນະຄະດີ ທີ່ພັກ ແລະລັດຖະບານແຫ່ງ ສ.ປ.ປ ລາວ ໄດ້ມອບນາມະຍົດນີ້ໃຫ້ຢ່າງສົມກຽດ ສັກສີໃນປີ 2011 ນີ້ ຍັງບໍ່ເຄີຍຈັດພິມເຜີຍແຜ່ຢູ່ໃສມາກ່ອນຈຶ່ງຖືວ່າ ແມ່ນການຈັດພິມຄັ້ງທຳອິດ.

ການໄດ້ອ່ານຄຳກອນທີ່ເປັນພາສາບູຮານ ແຕ່ມີຄຳແປເປັນຮ້ອຍແກ້ວ (ຄຳປະພັນ ທຳມະດາ) ແບບແຖວຕໍ່ແຖວ ໂດຍສີມືຂອງທ່ານນັກປາດຜູ້ນີ້ ຈະໄຂປ່ອງແປວລະທັດ ແລະກ່ອມຈູງອາລົມຈິດຂອງພວກເຮົາ ດັ້ນດົ້ນລົງສູ່ອັດຖະລົດແຫ່ງສັນທະລັກສະນະ ພາສາລາວທີ່ຮັ່ງມີ ແຝງຊ້ອນດ້ວຍຄະຕິທຳຄຳສອນ ຊອນແຊກຢູ່ໃນທຸກຕົວອັກຂະຫຼະພະຍາງ ຂອງວັນນະຄະດີເອກເລື່ອງນີ້ ສົມກັບທ່ານຜູ້ລິດຈະນາມຸ່ງຫວັງໄວ້.

ຂ້າພະເຈົ້າ ໃນນາມຜູ້ຊີ້ນຳວຽກງານວັດທະນະທຳ ດ້ານຈິດໃຈຜູ້ໜຶ່ງ ທີ່ເປັນລູກຫຼານໂດຍເຊື້ອຊາດ ແລະ ເປັນຜູ້ສືບສານໂດຍໜ້າທີ່ໃນຍຸກປັດຈຸບັນ ຂໍຖືໂອກາດນີ້ ສະແດງຄວາມກະຕັນຍູຮູ້ຄຸນຕໍ່ມະຫາກະວີຂອງລາວທັງສອງ ຄື ທ່ານປາງຄຳ ແລະ ທ່ານມະຫາສີລາ ວີຣະວົງ ທີ່ໄດ້ອຸທິດສະຕິປັນຍາ ສ້າງຜົນງານທີ່ຈະຄົງຢູ່ ເປັນອາພອນອາດເອ້ ຫຼໍ່ລ້ຽງຈິດວິນຍານ ສ້າງຄວາມເບີກບານໃຫ້ແກ່ຊີວິດພວກເຮົາຜູ້ເປັນລູກຫຼານ ສືບຕໍ່ໄປຕະຫຼອດກາລະນານ.

ຂໍສະແດງຄວາມຊົມເຊີຍຕໍ່ຄະນະຈັດພິມ ທີ່ມີຄວາມພະຍາຍາມບຸກບືນສູ້ຊົນ ຕື່ມເຕີມສີສັນ ແລະ ກິ່ນຫອມຫວນ ໃຫ້ນະຄອນຫຼວງວຽງຈັນ ເຮັດໃຫ້ນະຄອນຫຼວງແຫ່ງນີ້ລອຍລ່ອງຢູ່ໃນລະອອງເກສອນ ແຫ່ງອຸທິຍານອັກສອນສິນ ສົມກັບຄຳຊ່າລືວ່າ ຄັ້ງໜຶ່ງ ນະທີ່ນີ້ເປັນແດນດິນຖິ່ນໄມ້ຫອມຈວງຈັນ ສີສັດຕະນາຄະນະຫຸດມາແລ້ວ ແລະ ຈະຄົງຢູ່ເປັນອູ່ແຫ່ງວັດທະນະທຳຂອງຊາວລາວສືບຕໍ່ໄປ.

ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

ວຽງຈັນ, ຕຸລາ ພ.ສ. ໒໕໕໔

ບົວເງິນ ຊາພູວົງ

# ຄຳອະທິບາຍ ຂອງຜູ້ຈັດພິມ

## *ເປັນຫຍັງຈຶ່ງພິມ ຄຳກອນຄູ່ຮ້ອຍແກ້ວ*

ທ່ານມະຫາສີລາ ວີຣະວົງ ຍົກຍ້ອງບົດກະວີ ສັງສິນໄຊ ທີ່ປະພັນໂດຍ *ປາງຄຳ* ວ່າເປັນ *ວັນນະຄະດີຄຳກອນຊັ້ນຍອດຂອງລາວ* ແລະ ຂະໜານນາມ *ປາງຄຳ* ເປັນນັກປະພັນເອກແຫ່ງກຸງສີສັດຕະນາຄະນະຫຸດວຽງຈັນ ພຸດທະສະຕະວັດ 2193 (ຄ.ສ. 1650) ໝາຍຄວາມວ່າ ບົດກະວີນີ້ມີອາຍຸ 359 ປີແລ້ວ. ໂດຍເຫັນວ່າ ວັນນະຄະດີເລື່ອງນີ້ ມີຄຸນຄ່າຄົບຖ້ວນທາງດ້ານ ສັນທະສາດ ສັງຄົມ ມະນຸດສະທຳ ການປົກຄອງ ວັດທະນະທຳ ທຳມະຊາດ ... ດັ່ງທີ່ທ່ານໄດ້ຂຽນໄວ້ໃນຄຳນຳ ແຕ່ຊຸມຕົ້ນປີ 1930 ເມື່ອຄັ້ງແຮກຕົ້ນຊຳຣະລິດຈະນາຄຳກອນສິນໄຊ ແລະ ປະພັນແບບແຕ່ງກອນໄຫວຽງຈັນ ອອກໃນປີຕໍ່ໆມາ ຈາກນັ້ນ ທ່ານກໍໄດ້ພະຍາຍາມທຸກວິຖີທາງ ຈັດພິມເຜີຍແຜ່ ແລະ ນຳເຂົ້າຮັບໃຊ້ການສຶກສາ ຕັ້ງແຕ່ປາຍຊຸມປີ 1940 ຈົນເທົ້າເຖິງບັ້ນປາຍແຫ່ງຊີວິດ ເຊັ່ນ ໃນປີ 1968 ທ່ານໄດ້ກໍ່ຕັ້ງສະມາຄົມ *"ສິລະປະວັນນະກຳລາວ"*, ໄຂໂຮງມະໂຫສົບ *"ປາງຄຳ"* ເພື່ອສະແດງໝໍລຳເລື່ອງ ເລື່ອງສິນໄຊ ເປັນຄັ້ງປະຖົມມະເລີກ ແລະ ຕໍ່ມາໃນປີ 1969 ທ່ານກໍ່ໄດ້ຈັດພິມຄຳກອນ *"ສັງສິນໄຊ"* ເປັນສະບັບສົມບູນທີ່ສຸດ ເທົ່າທີ່ເຄີຍເຮັດມາໃນປະຫວັດສາດການຈັດພິມ ຄື ເປັນປຶ້ມປົກແຂງ ຕົວໜັງສືຄຳ ເຊິ່ງປັດຈຸບັນ ກາຍເປັນປຶ້ມທີ່ຫາຍາກເຫຼັ້ມໜຶ່ງໄປແລ້ວ. ຄວາມພະຍາຍາມຂອງທ່ານຍັງບໍ່ໝົດຄ່ານີ້ ໃນບັ້ນມັດສິມມະໄວແຫ່ງຊີວິດ ທ່ານໄດ້ພຽນແປຄຳກອນລ້ຳຄ່າຕ່ອນນີ້ ອອກເປັນຄຳທຳມະດາ ໂດຍຫວັງວ່າ ຜົນງານນີ້ຈະຊ່ອຍໃຫ້ຄົນຜູ້ເກີດໃໝ່ໄທຍ່ລຸນສາມາດອ່ານເຂົ້າໃຈ ແລະ ມ່ວນໄປນຳບົດກອນ ແຕ່ຜົນງານນີ້ ບໍ່ທັນໄດ້ຮັບການຈັດພິມອອກມາຮັບໃຊ້ສັງຄົມ ຕາມເຈດຕະນາຂອງເພິ່ນເທື່ອ ທ່ານກໍໄດ້ລາຈາກໂລກນີ້ໄປກ່ອນ.

ບັດນີ້ ເນື່ອງໃນໂອກາດອັນເປັນນິມິດໝາຍປະເສີດ ທີ່ປະເທດຊາດຂອງພວກເຮົາຈະສະຫຼອງ 450 ປີ ແຫ່ງນະຄອນຫຼວງວຽງຈັນ ພວກເຮົາຜູ່ເປັນລູກຫຼານ ຍາດພີ່ນ້ອງ ເພື່ອນມິດ ຄູບາອາຈານ

ຄະນະທີ່ເປີກສາກິດຈະກຳ *"ລະຄອນສິນໄຊ"* ນັກວັນນະຄະດີ ຜູ້ຮັກແພງຫວງແຫນວັນນະຄະດີເລື່ອງນີ້ ກໍຄືວັດທະນະທຳດ້ານຈິດໃຈຂອງຊາດ ມີຄວາມພາກພູມໃຈ ແລະ ຖືເປັນກຽດຢ່າງສູງ ທີ່ຈະໄດ້ປະກອບສ່ວນດ້ວຍການຈັດພິມ ວັນນະຄະດີຄຳກອນຊັ້ນຍອດຂອງລາວສະບັບນີ້ ພ້ອມດ້ວຍບົດແປຮ້ອຍແກ້ວ ຜົນງານຫຼ້າສຸດຂອງມື້ລາງ ທ່ານມະຫາ ສີລາ ວີຣະວົງ ອອກມາ. ນອກນີ້ ຍັງມີເຫດຜົນອື່ນໆ ທີ່ເປັນແຮງບັນດານໃຈ ຊຸກຍູ້ໃຫ້ພວກເຮົາ ຈັດພິມປຶ້ມຊຸດນີ້ ຄື:

1. ຄຳພັນລະນາເມືອງເປັງຈານ ໃນ ສັງສິນໄຊ ສະບັບນີ້ ສະທ້ອນຄວາມຮຸ່ງເຮືອງເຫຼືອງເຫຼື້ອມ ຂອງວຽງຈັນໃນຄິດສະຕະວັດ ທີ 17 ມີຄວາມຄ້າຍຄືກັນກັບຄຳພັນລະນາຂອງຜູ້ເດີນທາງ ນັກບວດ ຄຸນພໍ່ມາຣິນີ (Giovanni Fillipo de Marini) ທີ່ມາເຫັນວຽງຈັນ ໃນປີ ພ.ສ. 2183 ເຊິ່ງເປັນໄລຍະດຽວກັບທີ່ ທ່ານປາງຄຳ ປະພັນບົດກອນນີ້ (ຕາມການສັນນິຖານວ່າຄົງແຕ່ງຂຶ້ນໃນປີ ພ.ສ. 2193) ແລະ ພໍ່ຄ້າຊາວໂຮນລັງ ຄື ທ່ານ ວັນວຸດສະຕົບ ທີ່ເດີນທາງມາຮອດວຽງຈັນສະໄໝນັ້ນ (ຜົນງານແປ ໂດຍທ່ານ ທຸມພັນ ລັດຕະນະວົງ, ...... ) ຄືກັນ ແລະ ຍັງມີຄຳກອນ *"ນິລາດວຽງຈັນ"* ຂອງແມ່ທັບສະຫຍາມຊື່ *"ມ່ອມເຈົ້າທັບໃນກົມຫຼວງເສນີບໍລິລັກ"* ສະໄໝສົງຄາມ ປີ ຄ.ສ. 1826, ດັ່ງນັ້ນ ການໄດ້ອ່ານຄຳກອນສິນໄຊ ຈຶ່ງອາດຊ່ວຍໃຫ້ຄົນຮຸ່ນໃໝ່ສາມາດຈິນຕະນາການ ເຫັນຄວາມວິດວາມຍິ່ງໃຫຍ່ ຂອງນະຄອນຫຼວງເກົ່າແກ່ແຫ່ງນີ້ ດ້ວຍຄວາມພາກພູມໃຈ.

2. ຄຳກອນສັງສິນໄຊ ມີຊື່ເປັນໜຶ່ງໃນບັນຊີມໍລະດົກແຫ່ງຊາດດ້ານວັດທະນະທຳ ຕາມກົດໝາຍມໍລະດົກແຫ່ງຊາດ (ພາກທີ III ໝວດທີ 1 ມາດຕາທີ 18).

3. ໂຄງການເລົ່າກາບກອນ ຂອງກຸ່ມສືບທອດມໍລະດົກລ້ານຊ້າງ* (ສູນພັດທະນາການສຶກສາສຳຫຼັບເດັກ ພະແນກສຶກສານະຄອນຫຼວງວຽງຈັນ) ໄດ້ທົດລອງເອົາບົດກອນສິນໄຊ ໃຫ້ນັກຮຽນລະດັບປະຖົມ ແລະ ມັດທະຍົມເລົ່າ ແລະ ນຳສະແດງ ປາກົດວ່າກິດຈະກຳມີຜົນກະທົບໃນທາງບວກຫຼາຍຢ່າງ ຕໍ່ພັດທະນາການດ້ານສະຕິປັນຍາ ແລະ ພຶດຕິກຳຂອງເດັກ ຈຶ່ງຄວນໄດ້ຮັບການສະໜັບສະໜູນ ຂະຫຍາຍອອກສູ່ໂຮງຮຽນໃນທົ່ວປະເທດ ດ້ວຍການຈັດພິມປຶ້ມ ໃຫ້ເປັນຄູ່ມືເບື້ອງຕົ້ນ.

---

** ໝາຍເຫດ: ໂຄງການນີ້ ເລີ່ມຕົ້ນໃນປີ ຄ.ສ. 2006 ແລະ ມີນັກຮຽນຈາກ 20 ກວ່າໂຮງຮຽນ ໃນເຂດ ນະຄອນຫຼວງວຽງຈັນເຂົ້າຮ່ວມເກືອບ 200 ຄົນ*

ເຫດປັດໄຈ ແລະ ເງື່ອນໄຂເຫຼົ່ານີ້ ໄດ້ແຜ່ພະລັງ ຫຼໍ່ຫຼອມຄວາມນຶກຄິດຂອງພວກເຮົາເກີດສຳນຶກໃນພາລະກິດປົກປັກຮັກສາ ສືບທອດເຜີຍແຜ່ ຊົມໃຊ້ຢ່າງມີປະໂຫຍດ ດັ່ງທີ່ທ່ານສຸເນດ ໂພທິສານ (ນັກປະຫວັດສາດລາວ) ໄດ້ກ່າວຕໍ່ກອງປະຊຸມສຳມະນາ ໂຄງການສານສຳພັນໄທ-ລາວ "ວັນນະກຳ ດົນຕີ ກະວີ ສິລະປະ ສອງຝັ່ງຂອງ", ທີ່ວັດໄຊຍະສີ ບ້ານສາວັດຖີ ວັນເສົາ ທີ 25 ຕຸລາ 2008. ກ່ຽວກັບການນຳໃຊ້ຄວາມຮູ້ພູມທຳ ຜ່ານວັນນະຄະດີເລື່ອງນີ້ວ່າ *"ໃຫ້ຜູ້ເຍົາຈະເລີນໄວ ໃຫ້ຜູ້ໃຫຍ່ບັນເທີງເຖົ້າ ໃຫ້ພະສັງຄະເຈົ້າບັນເທີງສິນ ໃຫ້ຜູ້ໄດ້ຍິນໝົດທຸກຄົນ ມັກສະໜຸກຫັນມາຄິດ ໃຫ້ທຸກຄົນຕ້ອງເຜ່ງພິນິດ ໃຫ້ຜູ້ໝົດຄວາມຄິດໄດ້ເຫັນທາງ ໃຫ້ຄົນຕາຟາງໄດ້ສ່ອງຊອດ ໃຫ້ຄົນຕາບອດໄດ້ແນມເຫັນ"*. ສ່ວນພະອາຈານບຸນຊະຍາກອນ ເຈົ້າອາວາດວັດໄຊຍະສີເອງ ກໍໄດ້ສັງຣວມ ຄຸນຄ່າຂອງສິນໄຊໄວ້ເປັນ 4 ຂໍ້ ວ່າ:

*(1) ເຊື່ອມແນວຄິດ:* ຄືເຮັດໃຫ້ຊຸມຊົນ (ຊາວບ້ານ) ໄດ້ມີຖານຄຶດເລື່ອງສິລະປະ ວັດທະນະທຳ ທີ່ເຄົາຣົບ ຍອມຮັບກັນໄດ້ພໍສົມຄວນ,

*(2) ເຊື່ອມຊຸມຊົນ:* ເຮັດໃຫ້ຄົນໃນຊຸມຊົນ (ບ້ານ) ສືບທອດສອດປະສານເຂົ້າຫາກັນໄດ້ (ບ້ານ ວັດ ໂຮງຮຽນ).

*(3) ເຊື່ອມສັງຄົມ:* ເຮັດໃຫ້ເກີດຄວາມກ້າ ນຳສິລະປະວັດທະນະທຳທ້ອງຖິ່ນ ໄປແລກປ່ຽນຮຽນຮູ້ກັບຊຸມຊົນ ຫຼືໜ່ວຍງານອື່ນ ຈົນເຮັດໃຫ້ຊຸມຊົນສາມາດເຊື່ອມໂຍງແນວຄຶດ ມີວັດທະນະທຳສຳພັນທີ່ກວ້າງໄກອອກໄປ ແລະ

*(4) ເຊື່ອມການພັດທະນາ:* ໂດຍສາມາດນຳມາໝູນໃຊ້ລະຫວ່າງຍຸກສະໄໝ ໃຫ້ເກີດແນວທາງທີ່ເກີດການພັດທະນາ ສອດຄ່ອງກັບຍຸກສະໄໝ ບົນພື້ນຖານວັດທະນະທຳພູມປັນຍາທີ່ເຂັ້ມແຂງຂອງຕົນເອງ.

ໃນໂອກາດນີ້ ຜູ່ຂຽນເຊິ່ງໄປເປັນວິທະຍາກອນຄົນໜຶ່ງ ກໍໄດ້ນຳສະເໜີ ຄຸນຄ່າຮ່ວມສະໄໝດ້ານອື່ນໆ ຂອງວັນນະຄະດີເລື່ອງນີ້ ໂດຍທຽບໃສ່ກັບວັນນະຄະດີເລື່ອງຍິ່ງໃຫຍ່ອື່ນໆ ຂອງໂລກທີ່ໄດ້ຮັບການປະກາດຍົກຍ້ອງ ໂດຍ ອຸຍເນສໂກ (UNESCO) ຄືຄຸນຄ່າທີ່ມີລັກສະນະສາກົນ ເຊັ່ນ: ລັກສະນະມະນຸດສະທຳນິຍົມ ການບໍ່ຈຳແນກແບ່ງເຊື້ອຊາດສີຜິວ, ລັກສະນະສັນຕິນິຍົມ ຫຼີກເວັ້ນ

ການໃຊ້ກຳລັງອາວຸດ ແຕ່ອາໄສການເຈລະຈາ ໆລໆ. ນອກນີ້ ວັນນະຄະດີເລື່ອງນີ້ ກໍຍັງສະທ້ອນຄ່ານິຍົມຮ່ວມຂອງທ້ອງຖິ່ນອື່ນໆ ອອກມາຢ່າງອຸດົມສົມບູນ ຄືລະບອບ ບຸລຸດເພດທີປະໄຕ (patriacharch) ແລະ ລະບອບພະຫຸພັນລະຍາ (ມີເມຽຫຼາຍຄົນໄດ້ພາບດຽວ (polygamy). ເບິ່ງແລ້ວ ວັນນະຄະດີຄຳກອນເລື່ອງ ສັງສິນໄຊສະບັບນີ້ ກໍສົມທີ່ຈະໄດ້ຮັບການເຊີດຊູຍົກຍ້ອງຂຶ້ນໃນລະດັບສາກົນໄດ້ ແຕ່ທັງນີ້ ນັກວິຊາການແຫ່ງຊາດ ນັກຄົ້ນຄວ້າພາຍໃນ ກໍຄົງຈະຕ້ອງຄົ້ນຄວ້າວິໄຈໃນລະດັບເລິກເຊິ່ງຍິ່ງຂຶ້ນ ແລະ ນຳໃຊ້ເພື່ອການສຶກສາໃນລະດັບສູງ ພ້ອມທັງການພູນໃຊ້ ດ້ານວັດທະນະທຳ ສັງຄົມອື່ນໆ (ລະຄອນ ວີດີໂອ ບົດເພງ ... )

ຄຳກອນ ສັງສິນໄຊ ຄູ່ຮ້ອຍແກ້ວ ເຫຼັ້ມ ໑-໔ ເປັນຜົນງານທຳອິດຂອງແຜນຈັດພິມຊຸດ "ມໍລະດົກວຽງຈັນ" ຂອງ ບໍລິສັດ ດອກເກດການພິມຈຳກັດ. ນອກຈາກວັນນະກຳເອກເລື່ອງນີ້ແລ້ວ ພວກເຮົາຍັງຈະຈັດພິມ ຊີວະປະຫວັດຂອງເຈົ້າອະນຸວົງ, ສານລຶບພະສູນ, ຮີດຄອງປະເພນີຊາວວຽງຈັນ ແລະ ອື່ນໆ ອີກ.

ຂໍຂອບໃຈ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ທີ່ໃຫ້ການຮ່ວມມືສະໜັບສະໜູນເຮັດໃຫ້ການຈັດພິມຄັ້ງນີ້ ສົມບູນດ້ວຍຄຸນນະພາບ ແລະ ຮູບແບບ ສົມກັບເປັນມໍລະດົກລ້ຳຄ່າຂອງຊາດ.

*ສຳນັກພິມດອກເກດ, ຕຸລາ ໒໐໑໑*

*ຜູ້ອຳນວຍການ*

*ດວງເດືອນ ບຸນຍາວົງ*

# ຄຳອະທິບາຍ

ປະຫວັດຂອງໜັງສືເລື່ອງ ທ້າວສັງສິນໄຊ
(ຄັດມາຈາກ ສະບັບຈັດພິມ ປີ ພ.ສ. 2512 ຫຼື ຄ.ສ. 1969 )

ທ່ານໄດ້ເຫັນຊື່ໜັງສືນີ້ໃນໜ້າປົກວ່າ " ເຣື່ອງທ້າວສັງຂ໌ສິລປຊັຍ" ອັນຜິດຈາກຄຳເວົ້າທີ່ເຄີຍໄດ້ຍິນທົ່ວໆໄປວ່າ

" ເລື່ອງທ້າວສິນໄຊ" ນັ້ນກໍເພາະວ່າ ຊື່ແທ້ຂອງທ້າວສິນໄຊ ທີ່ມີຜາກົດຢູ່ໃນໜັງສືນີ້ຮຽກວ່າ *"ສັງຂ໌ສິລປ໌ຊັຍ "* ແລະ ເປັນຊື່ທີ່ພະອິນຕັ້ງໃຫ້ ດັ່ງມີຄຳກອນຕອນປະຕິສົນທິນັ້ນ

ວ່າ " ອິນຈິ່ງໃສ່ຊື່ນ້ອຍ ໃນເລກລານຄຳ
ຮຽກຊື່ວ່າ ສັງສິນໄຊກຸມມານ ໂລກລືລິດທີກ້າ "

ແລະທີ່ຂຽນເປັນ ສັງສິນໄຊ ກໍເພາະທ້າວຜູ້ນີ້ຜາບແພ້ສັດຕູກໍຍ້ອນລິດເດດຂອງ ຫອຍສັງ ແລະ ທະນູສິນ.

ໜັງສືເລື່ອງທ້າວສັງສິນໄຊນີ້ ແຕ່ເດີມເປັນໜັງສືເທດລຳ ຮຽກວ່າ "ລຳສິນໄຊ" ຫຼື ສັງສິນໄຊຊາດົກ ມີຢູ່ສອງມັດໆ ລະປະມານ 21 ຜູກໃບລານ ຂຽນດ້ວຍຕົວອັກສອນທຳ ແລະວ່າເລື່ອງທ້າວສັງສິນໄຊນີ້ ມີມາໃນຄຳພີປັນຍາສະຊາດົກດ້ວຍ, ໜັງສືສັງສິນໄຊຊາດົກອັນເປັນສະບັບເດີມນີ້ມີຄຳຂຶ້ນຕົ້ນເປັນພາສາບາລີຢູ່ສອງສາມຄຳວ່າ " ເອວະເມສຸຕັງ ເອກັງສະມະຍັງ ພະຄະວາຣາຊະຄະເຫ ວິຫະຣະຕິ ເວລຸວະເນ " ທໍ່ນີ້ ແລ້ວກໍມີຄຳບັນຍາຍ ຫຼືຄຳແປກ່ອນຈະດຳເນີນເລື່ອງວ່າ " ຄັ້ງໜຶ່ງ ພະພຸດທະເຈົ້າປະທັບຢູ່ວັດເວລຸວັນ ໃກ້ເມືອງລາຊະຄຶຫະ ຄາວນັ້ນ ພະພິກຂຸທັງຫຼາຍໄດ້ປະຊຸມກັນຢູ່ສາລາໂຮງທຳ ຜາຣົບກັນວ່າ ພະພຸດທະເຈົ້າຂອງເຮົານີ້ ມີລິດເດດຄວນງຶດງໍ້ອັດສະຈັນໜັກໜາ ພະສາສະດາໄດ້ຊົງສະດັບສຽງພິກຂຸສົນທະນາກັນຈິ່ງສະເດັດມາໃນທີ່ປະຊຸມ ແລ້ວຕັດບອກ

ພິກຂຸທັງຫຼາຍວ່າ ເຮົາພະອົງບໍ່ມີລິດເດດທີ່ໜ້າອັດສະຈັນ ແຕ່ໃນເວລາທີ່ໄດ້ຕັດສັບພັນຍູແລ້ວທໍ່ນີ້ດອກ ແຕ່ປາງເຮົາຍັງເປັນປຸຖຸຊົນຢູ່ ກໍເປັນຜູ່ມີລິດເດດລວນງຶດງໍ້ຄືກັນ ແລ້ວຈຶ່ງໄດ້ຕັດເລື່ອງພະອົງເກີດເປັນທ້າວສັງສິນໄຊ ໃຫ້ພະສົງທັງຫຼາຍຟັງ... " ດັ່ງນີ້.

ອັນເລື່ອງທ້າວສັງສິນໄຊ ທີ່ກ່າວວ່າມີມາໃນຄຳພີ 50 ຊາດນີ້ ຂ້າພະເຈົ້າໄດ້ລອງຄົ້ນເບິ່ງໜັງສື 50 ຊາດ ເຊິ່ງຫໍສະໝຸດແຫ່ງຊາດໄທ ໄດ້ຈັດພິມຂຶ້ນໄວ້ທັງໝົດ ບໍ່ເຫັນມີເລື່ອງສັງສິນໄຊ ເຫັນມີແຕ່ເລື່ອງທ້າວຈັນທະຄາດ ສຸດຕະໂສມ ສຸດທະນູ ສຸທໍາ ແລະ ອື່ນໆ ຫາກວ່າເລື່ອງສັງສິນໄຊນີ້ມີມາໃນຄຳພີ 50 ຊາດແທ້ ຄຳພີນັ້ນກໍຄົງເປັນຄຳພີອັນມີມານອກພະໄຕປິດົກ ຄືເປັນຄຳພີ ທີ່ພະເກຈິອາຈານແຕ່ງຂຶ້ນໃໝ່ ໂດຍຍຶດເອົາປະຫວັດຂອງພະກະສັດອົງໃດອົງໜຶ່ງ ທີ່ມີພະກຽດຕິຍົດລືຊາໃນສະໄໝນັ້ນຂຶ້ນເປັນພະໂພທິສັດ ດັ່ງເລື່ອງທ້າວສັງສິນໄຊນີ້ ຄົງຈະແຕ່ງປຽບທຽບເອົາເລື່ອງພະເຈົ້າມັງລາຍ ພະກະສັດແຫ່ງນະຄອນຊຽງແສນຊຽງຣາຍ ທີ່ມີເດຊານຸພາບຫຼາຍໃນສະໄໝນັ້ນ ເພາະໃນພະປະຫວັດຂອງພະເຈົ້າມັງລາຍກ່າວໄວ້ວ່າ ພະເຈົ້າມັງລາຍປະສູດປີຈຸນລະສັກກະຫຼາດ 611 (ພ.ສ. 1793) (ສະບັບໜຶ່ງວ່າ 600) ສ່ວນໃນໜັງສືລຳສິນໄຊສະບັບອັກສອນທຳນີ້ ກໍບອກວ່າ "ນາງສຸມຸນທາ ນ້ອງສາວຂອງພະຍາກຸດສະຫຼາດ ຜູ່ເປັນພະລາຊະບິດາຂອງທ້າວສັງສິນໄຊ ເກີດປີກາບສະງ້າ (ປີມະເມຽ) ເດືອນ 4 ແຮມ 3 ຄ່ຳ ວັນອາທິດຍາມກອງງາຍ ຈຸນລະສັກກະຫຼາດ 614 " ວ່າດັ່ງນີ້ ຂໍ້ນີ້ເອງທີ່ພາໃຫ້ສັນນິດຖານວ່າ ເລື່ອງທ້າວສັງສິນໄຊ ຄົງແຕ່ງປຽບທຽມເອົາເລື່ອງພະເຈົ້າມັງລາຍ ຍ້ອນວ່າ ພະເຈົ້າມັງລາຍເກີດປີຈຸນລະສັກກະຫຼາດ 611 ແລະ ນ້ອງສາວຂອງພະຍາກຸດສະຫຼາດ ເກີດປີຈຸນລະສັກກະຫຼາດ 614 ພໍດີເປັນອ້າຍນ້ອງກັນ ແລະເລື່ອງຂອງຈຸນລະສັກກະຫຼາດນີ້ ກໍບໍ່ເຄີຍມີມາໃນຄຳພີພະໄຕປິດົກເລີຍ ຍິ່ງເປັນເລື່ອງຊາດົກນຳແລ້ວ ກໍບໍ່ເຄີຍມີບອກສັກກະຫຼາດໃດໆໄວ້ທັງໝົດ ເພາະເປັນເລື່ອງອະດີດຕະຊາດນັບເປັນແສນປີລ້ານປີຂຶ້ນໄປ ສ່ວນຈຸນລະສັກກະຫຼາດ ນີ້ເປັນຂອງຕັ້ງຂຶ້ນໃໝ່ ລຸນຫຼັງພະພຸດທະສັກກະຫຼາດຕັ້ງ 1181 ປີ ດັ່ງນີ້ຈຶ່ງເຊື່ອວ່າເລື່ອງສັງສິນໄຊຊາດົກ ເປັນຊາດົກທີ່ແຕ່ງຂຶ້ນໃໝ່ ໂດຍຍົກເອົາປະຫວັດຂອງພະກະສັດທີ່ມີພະນາມລືຊາໃນສະໄໝນັ້ນມາເປັນພະໂພທິສັດ ຫຼືພະເອກດັ່ງກ່າວແລ້ວ ນອກຈາກນີ້ ໃນໜັງສືລຳສິນໄຊມັດປາຍຍັງໄດ້ກ່າວເຖິງລູກຊາຍຂອງທ້າວສັງສິນໄຊ ຣົບເຣວກັບລູກຊາຍຂອງທ້າວທັງ 6 ຜູ່ເປັນສັດຕູກັນ ແລະໃນການຣົບເຣວຄັ້ງນີ້ ລູກທ້າວສັງສິນໄຊໄດ້ຮ້ອງຂໍໃຫ້ຫົວເມືອງຕ່າງໆ ອັນມີຊື່ຢູ່ໃນປັດຈຸບັນນີ້ໃຫ້ມາຊ່ອຍຄື ເມືອງທໍ້ຫົວຂອງ ເມືອງທວາຍ ເມືອງພະໂຄ ເມືອງສາວັດຖີ ຄື ຍູນານ ແລະ ເມືອງລ້ານຊ້າງ ດັ່ງມີຄຳກອນວ່າ

| | | | | |
|---|---|---|---|---|
| (1) | " ກ້າຝ່າຍຫຼໍ້ | ພະຍາໃຫຍ່ | ຫົວຂອງ | ກໍເຖິງ |
| (2) | ພູໃຊ່ທ້າວ | ສະເຫວີຍລາດ | ເມືອງພະໂຄ | ກໍເຖິງ |
| (3) | ພະບາດທ້າວ | ສະເຫວີຍລາດ | ເມືອງທວາຍ | ກໍເຖິງ |
| (4) | ພະບາດທ້າວ | ສະເຫວີຍລາດ | ສາວັດຖີ | ກໍເຖິງ |
| (5) | ແມ່ນວ່າ | ສຸວັນນະພູມຫ້ອງ | ເມືອງລາວຍົດຍິ່ງ | ກໍເຖິງ |
| | ຂໍເຊີນ | ເຈົ້າລ້ານຊ້າງ | ມາພ້ອມຊ່ອຍມື " | ດັ່ງນີ້ |

ສ່ວນລູກຊາຍຂອງທ້າວທັງ 6 ທີ່ຢູ່ເມືອງອິນທະສາເກດ (ເຫັນຈະແມ່ນແຖວໆຈັງຫວັດສຸລິນ ສີສະເກດ ແລະ ຮ້ອຍເອັດນີ້ເອງ) ກໍໄດ້ເຊີນເອົາຊົນເຜົ່າຕ່າງໆ ໃຫ້ມາຊ່ອຍຄື ເຜົ່າຂ້າພາງດຳ* ພາງແດງ ດອຍງ່ອນ ດອຍຮັງ ເປັນຕົ້ນ ດັ່ງມີຄຳກອນວ່າ

" ແມ່ນວ່າພາງພາຍເບື້ອງ — ດອຍກອງຄອນຄູ່ ກໍດີ
ເຂົາກໍລົງຊ່ອຍເຈົ້າ — ເມືອງນັ້ນບໍ່ຫຼໍ
ແມ່ນວ່າທຸກນະຄອນກ້ຳ — ພະນອງຖອງຖະໝຸນລາດ
ເມືອງຝ່າຍຊັ້ນ — ລະແດດ້າວໂຄບເຕັງ(ເຜົ່າຣະແດ)
ຝູງໝູ່ຕຸມພອນພ້ອມ — ທັງປະເລົາລົວະຖິ່ນ
ສະຫຼົງພ່ຳພ້ອມ — ລົງສ້ວຍຊູ່ເມືອງ
ພູຕຸມພ້ອມ — ພູເຕົາເກົ້າບາກ
ຈະລາຍພ່ຳພ້ອມ — ລົງເຂົ້າສ່ວຍໄຮ "(ເຜົ່າຈະຣາຍ)
ໆ ລ ໆ

ຂໍ້ຄວາມທີ່ກ່າວມານີ້ ສະແດງໃຫ້ເຫັນວ່າ ສົງຄາມລະຫວ່າງລູກທ້າວສັງສິນໄຊ ກັບລູກທ້າວທັງ 6 ນັ້ນ ແມ່ນສົງຄາມລະຫວ່າງພວກລາວກັບພວກຂອມ ແລະ ເຜົ່າຂ້າອັນເປັນເຈົ້າຂອງຖິ່ນເດີມ ຕັ້ງແຕ່ສະໄໝຂອງ ພະເຈົ້າມັງລາຍ ແຫ່ງນະຄອນຊຽງແສນ ແລະ ພະເຈົ້າພົມ ຕະຫຼອດລົງມາຈົນເຖິງພະເຈົ້າຟ້າງຸ່ມນັ້ນເອງ

---

* *ພາງດຳ* ລາງນັກປາດເຫັນວ່າ ອາດຈະແມ່ນ *ຍາງດຳ* ແຕ່ໃນໜັງສືເລື່ອງທ້າວຮຸ່ງ ທ້າວເຈືອງ ກໍປາກົດຊື່ດຽວນີ້ຄືກັນ.

## ທ້າວປາງຄຳເປັນຜູ່ແຕ່ງໜັງສື ສັງສິນໄຊ ອອກເປັນຄຳກອນ

ໜັງສືເລື່ອງສັງສິນໄຊຊາດົກນີ້ ຜູ່ແຕ່ງເດີມແຕ່ງເປັນຄຳຮ້ອຍແກ້ວ ຫຼື ເປັນໜັງສືເທດແບບໜັງສືຊາດົກທັງຫຼາຍນັ້ນເອງ ຕໍ່ມາພາຍລຸນ ທ້າວປາງຄຳຈຶ່ງໄດ້ແຕ່ງອອກເປັນຄຳກອນໃຊ້ສຳຫຼັບອ່ານຟັງໃນເວລາມີຄວາມໂສກເສົ້າ ດັ່ງເວລາງັນເຮືອນດີເປັນຕົ້ນ ໜັງສືຊາດົກປະເພດທີ່ແຕ່ງເປັນຄຳກອນນີ້ຈຶ່ງຮຽກວ່າ "ໜັງສືຜູກ" ເພາະເຮັດເປັນຜູກໃຫຍ່ຜູກດຽວບໍ່ໄດ້ແບ່ງເປັນກັນໆ.

ທ້າວປາງຄຳແຕ່ງໜັງສືສັງສິນໄຊ ອອກເປັນຄຳກອນນີ້ ໄດ້ແຕ່ງແຕ່ມັດຕົ້ນ ເຊິ່ງກ່າວຕັ້ງແຕ່ຍັກກຸມພັນມາລັກເອົານ້ອງສາວພະຍາກຸດສະຫຼາດໄປ ຈົນທ້າວສັງສິນໄຊ ໄດ້ໄປນຳເອົາຄືນມາ ແລະສັງສິນໄຊຂຶ້ນສະເຫວີຍລາດທີ່ນັ້ນ ສ່ວນຕອນປາຍ ຫຼື ມັດປາຍ ອັນກ່າວເຖິງຕັ້ງແຕ່ຍັກກຸມພັນກັບເກີດຄືນມາແລ້ວໄດ້ມາລັກເອົານາງສຸມຸນທາຄືນໄປອີກ ຈົນສຸດເຖິງຕອນລູກທ້າວທັງ 6 ແລະລູກທ້າວສິນໄຊ ຣົບກັນນັ້ນ ທ້າວປາງຄຳ ບໍ່ໄດ້ແຕ່ງ ແຕ່ມີອາຈານອື່ນແຕ່ງຕໍ່ຈົນສຸດຄືກັນ.

ທ້າວປາງຄຳແຕ່ງຄຳກອນເລື່ອງນີ້ໃນປີສະຫູ ເດືອນ 3 ເລີກສັດຕະພິດ ເວລາຄ່ຳ ແຕ່ຈະເປັນປີສະຫູ ຈຸນລະສັກກະຫຼາດທີ່ໄດ້ ບໍ່ຮູ້ ມີແຕ່ຄຳຜາຣົບວ່າໄວ້ດັ່ງນີ້ :

" ຍາມນັ້ນມະຫາເມກເຄົ້າ ... ຄະນິງເນ່ງບັງບົດ
ສູລະພາອຽງ ... ອວ່າຍແລງລົງໄມ້
ອາທິດຈອນ ... ຈັບແຈ້ງເດືອນສາມສັດຕະພິດ
ສະຫູຮູບເນື້ອ ... ເນົາວະຊ້ອຍຊອບຍາມ " ດັ່ງນີ້ :

# ປະຫວັດທ້າວປາງຄຳ

ໃນຄຳນຳໜັງສືຄຳກອນເລື່ອງທ້າວສັງສິນໄຊ ທີ່ຂ້າພະເຈົ້າໄດ້ພິມມາແຕ່ປີ ພ.ສ. 2492 ນັ້ນ ຂ້າພະເຈົ້າໄດ້ສັນນິດຖານປະຫວັດຂອງທ້າວປາງຄຳໄວ້ວ່າ " ທ້າວປາງຄຳຄົງຈະເປັນຄົນໆດຽວກັນກັບພະເຈົ້າຕ່ອນຄຳ ພະລາຊະບິດາຂອງສົມເດັດພະເຈົ້າສຸຣິຍະວົງສາທຳມິກກະລາດ ໂດຍທີ່ເຫັນວ່າ ໃນສະໄໝຂອງ ພະເຈົ້າຕ່ອນຄຳນັ້ນ ເປັນສະໄໝດຽວກັນກັບພະເຈົ້າປຣາສາທທອງ ແຫ່ງກຸງສີອະຍຸດທະຍາ (ລະຫວ່າງ ພ.ສ. 2173-2198) ແລະ ຄຳວ່າ "ປຣາສາທທອງ" ນັ້ນກໍແປວ່າ ປາງຄຳນັ້ນເອງ ດັ່ງນັ້ນຈຶ່ງເຫັນວ່າ ພະເຈົ້າຕ່ອນຄຳ ອາດຈະເປັນພະເຈົ້າປາງຄຳກໍໄດ້ ແລະເຈົ້າປາງຄຳອາດຈະໄດ້ແຕ່ງໜັງສືຄຳກອນເລື່ອງສັງສິນໄຊຂຶ້ນ ໃນປີສະຫູ ຈຸນລະສັກກະຫຼາດ 998 " ດັ່ງນີ້ນັ້ນອາດຈະຜິດພາດໄປ ເພາະວ່າເມື່ອໄດ້ສືບສວນເບິ່ງເຫດການຂອງວຽງຈັນ ລະຫວ່າງຈຸນລະສັກກະຫຼາດ 995-1053 (ພ.ສ. 2177-2235) ສະໄໝຂອງສົມເດັດພະເຈົ້າ ສຸຣິຍະວົງສາທຳມິກກະລາດ ແລະ ໃນພົງສາວະດານເມືອງນະຄອນຈຳປາສັກ ກໍໄດ້ກ່າວໄວ້ວ່າ " ປີຈຸນລະສັກກະຫຼາດ 1003 (ພ.ສ. 2185) ທ້າວປາງຄຳເມືອງໜອງບົວລຳພູ ໄດ້ລົງໄປຄ້ອງຊ້າງທີ່ເມືອງຈຳປາສັກດ້ວຍ. ສະນັ້ນທ້າວປາງຄຳຄົງຈະບໍ່ແມ່ນຄົນດຽວກັນກັບພະເຈົ້າຕ່ອນຄຳຢ່າງແນ່ນອນ ແຕ່ຫາກຄົງຈະເປັນເຊື້ອພະວົງຂອງພະເຈົ້າສຸຣິຍະວົງສາ ຫຼືບໍ່ດັ່ງນັ້ນ ກໍຄົງເປັນຫຼານຂອງພະເຈົ້າຕ່ອນຄຳນັ້ນເອງ ແລ້ວໄດ້ໄປປົກຄອງເມືອງໜອງບົວລຳພູ (ອຳເພີໜອງບົວລຳພູ ໃນຈັງຫວັດອຸດອນດຽວນີ້) ອັນເປັນເມືອງໜ້າດ່ານ ແລະເປັນຜູ້ຄວບຄຸມກອງທັບຊ້າງ ທຳການແອບເຝິກຊ້າງຢູ່ໃນເມືອງນີ້ ເພາະເມືອງໜອງບົວລຳພູ ເປັນສະຖານທີ່ມີພູມປະເທດເໝາະສົມສຳຫຼັບລ້ຽງຊ້າງຈຳນວນຫຼາຍໆ ດີກວ່າເມືອງອື່ນ (ກ່ຽວກັບເລື່ອງນີ້ເມື່ອປີ ພ.ສ. 2487 ທີ່ເມືອງໜອງບົວລຳພູ ມີຜູ້ຂຸດໄດ້ງາຊ້າງຢູ່ໃນສວນກ້ວຍແຫ່ງໜຶ່ງມີຈຳນວນເຖິງ 29 ຄູ່ ແຕ່ຫາກຖືກດິນກັດຜຸພັງເກືອບໝົດແລ້ວ) ທ້າວປາງຄຳຜູ້ເປັນແມ່ທັບຈຶ່ງໄດ້ໄປປົກຄອງເມືອງນີ້ ເພາະໃນໜັງສືພົງສາວະດານເມືອງນະຄອນຈຳປາສັກໄດ້ກ່າວເຖິງທ້າວປາງຄຳໄວ້ດັ່ງນີ້ :

"ເມື່ອປີສັກກະຫຼາດໄດ້ 1003 ປີມະເສງຕີສິກ (ພ.ສ. 2184 ) ເຈົ້າປາງຄຳ ເມືອງໜອງບົວລຳພູພ້ອມດ້ວຍທ້າວເພຣໄພ່ພິນ ລົງມາທ່ຽວຫາຄ້ອງຊ້າງຕາມອະລັນຍະປະເທດຣາວປ່າ ມາເຖິງ

ເຂດແດນນະຄອນຈຳປາສັກ ໄດ້ເຂົ້າໄປພັກເຊົາຢູ່ໃນເມືອງຫຼາຍມື້ ເຈົ້າປາງຄຳໄດ້ເຫັນນາງເຜົາ ລູກເຈົ້າເມືອງຈຳປາສັກ ມີຮູບໂສມຈົບງາມຫຼາຍ ກໍເກີດຄວາມສະເໜຫາ ຈຶ່ງໄດ້ລອບລັກເຂົ້າໄປຫານາງ ຈົນນາງເຜົາທົ່ງຄັບ ແລ້ວເຈົ້າປາງຄຳກໍພາໄພ່ພົນກັບຄືນມາໜອງບົວລຳພູ ສ່ວນນາງເຜົາເມື່ອທົ່ງຄັບຖ້ວນ 10 ເດືອນແລ້ວ ກໍປະສູດລູກເປັນຜູ້ຍິງ ເວລາປະສູດນັ້ນ ນາງມີຄວາມເຈັບປວດທົນທຸກເວທະນາຫຼາຍ ນາງຈຶ່ງໄດ້ອອກວາຈາປ້ອຍແຊ່ງໄວ້ວ່າ " ຍິງໃດຫາຜົວບໍ່ໄດ້ ໃຫ້ຊາຍມາລັກລອບເສບສົມຈົນມີຄັບດັ່ງນີ້ ໃຫ້ຍິງນັ້ນຈັດຫາຄວາຍແຕ່ງເຄື່ອງພະລີກຳ ອາຮັກຫຼັກເມືອງເສຽ ຖ້າຜູ້ໃດບໍ່ເຮັດຕາມ ໃຫ້ເຂົ້າໃນໄຮ່ຕາຍຄາ ເຂົ້າໃນນາຕາຍແລ້ງ " ດັ່ງນີ້ ແລ້ວນາງຈຶ່ງສັ່ງໃຫ້ພະຍາຄຳຢາດ ພະຍາສອງລາດ ພ້ອມດ້ວຍທ້າວເພຽໃຫຍ່ນ້ອຍ ເຮັດໜັງສືປະທັບກາຈ້ຳຄັ່ງຮູບຊ້າງຢືນແທ່ນປະກາດໃຫ້ພວກຂ້າສ່ວຍໃນເຂດແດນ ປະຕິບັດຕາມເປັນປະເພນີສືບມາຈົນເຖິງທຸກວັນນີ້".

ຂໍ້ຄວາມທີ່ກ່າວເຖິງທ້າວປາງຄຳໃນຕຳນານເມືອງຈຳປາສັກກໍມີພຽງເທົ່ານີ້ ແລະໃນໜັງສືອື່ນໆກໍບໍ່ເຫັນມີກ່າວໄວ້ ຈຶ່ງເປັນການຍາກທີ່ສຸດທີ່ຈະຮູ້ວ່າ ທ້າວປາງຄຳເປັນລູກເຕົ້າຂອງຜູ້ໃດແທ້ ແລະໃນຂໍ້ທີ່ວ່າ ທ້າວປາງຄຳໄດ້ແຕ່ງໜັງສືສັງສິນໄຊ ເປັນຄຳກອນນີ້ໃນປີສະຫຼູນັ້ນກໍບໍ່ຮູ້ວ່າ ແມ່ນປີສະຫຼູສັກກະຫຼາດໄດ້ທໍ່ໃດ ແຕ່ຖ້າຈະໃຫ້ສັນນິດຖານກໍຄົງຈະແມ່ນ ປີສະຫຼູ ຈຸນລະສັກກະຫຼາດ 1011 (ພ.ສ. 2193) ພາຍລຸນກັບຈາກເມືອງຈຳປາສັກມາແລ້ວ 8 ປີ ອັນເປັນລັດຊະສະໄໝ ຂອງສົມເດັດພະເຈົ້າສຸຣິຍະວົງສາທຳມິກກະລາດນັ້ນເອງ.

ທ້າວປາງຄຳຜູ້ແຕ່ງໜັງສືຄຳກອນເລື່ອງທ້າວສັງສິນໄຊນີ້ ນັບວ່າເປັນນັກກະວີ ຫຼື ນັກປະພັນຊັ້ນເອກຂອງລາວ ເປັນຜູ້ມີຄວາມຮູ້ກວ້າງຂວາງ ເລິກແລບ ໃນທຸກດ້ານທຸກທາງ ບໍ່ວ່າແຕ່ໃນທາງການປົກຄອງການເມືອງ ແລະຄວາມຊຳນິຊຳນານໃນປ່າດົງພົງໄພ ເຖິງແມ່ນໃນທາງສາສະໜາກໍມີຄວາມຮູ້ຢ່າງກວ້າງຂວາງດ້ວຍ ຂໍ້ຄວາມທີ່ກ່າວນີ້ຈະສັງເກດໄດ້ຈາກສຳນວນຄຳເວົ້າ ແລະບົດກອນນັ້ນເອງ ເພາະວ່າບັນດາໜັງສືຄຳກອນເລື່ອງຍາວໆທັງຫຼາຍ ອັນມີຢູ່ໃນຜືນແຜ່ນດິນລາວຕັ້ງແຕ່ບູຮານມາຈົນຕະຫຼອດຮອດທຸກວັນນີ້ ຍັງບໍ່ເຄີຍເຫັນບົດກອນເລື່ອງໃດ ທີ່ຈະແຕ່ງໄດ້ຖືກຕ້ອງຄົບບົດຄົບບາດ ມີຄຳເວົ້າຄ່ອງຄືອອນຊອນເໝາະສົມ ບໍ່ເຂີນ ແລະໄດ້ຄວາມໝາຍທຸກຖ້ອຍຄຳ ຄືກັບຄຳກອນເລື່ອງສັງສິນໄຊ ນີ້ເລີຍ ນອກຈາກເລື່ອງທ້າວຮຸ່ງ ຫຼື ທ້າວເຈືອງທໍ່ນັ້ນ ທີ່ພໍໄປຄູ່ຄຽງຄຳກອນເລື່ອງສັງສິນໄຊໄດ້ ສະນັ້ນໜັງສືຄຳກອນທັງສອງເລື່ອງນີ້ ຈຶ່ງນັບວ່າເປັນບົດວັນນະກຳຊັ້ນຍອດຂອງວັນນະຄະດີລາວໃນປະເພດຄຳກອນ ແຕ່ບົດວັນນະກຳເລື່ອງທ້າວຮຸ່ງຫຼືທ້າວເຈືອງນັ້ນ ບໍ່ເຫັນມີແຜ່ຜາຍຫຼາຍ ຂ້າພະເຈົ້າໄດ້ເຫັນມີສະບັບດຽວຢູ່ຫໍສະໝຸດກຸງເທບ ເຊິ່ງພະເຈົ້າແຜ່ນດິນສະຫຍາມ

ລັດຊະການທີ 5 ໄດ້ໃຫ້ເກັບຫ້ອນໂຮມໄວ້ ແລະ ຂ້າພະເຈົ້າໄດ້ກ່າຍອອກມາພິມເປັນອັກສອນໄທໄວ້ແລ້ວເທື່ອໜຶ່ງ ແຕ່ຍັງບໍ່ເຄີຍໄດ້ພິມເປັນອັກສອນລາວເລີຍ.

ເນື່ອງຈາກຄຳກອນເລື່ອງສັງສິນໄຊ ເປັນວັນນະຄະດີຊັ້ນຍອດ ຈຶ່ງມີຜູ່ຂຽນກ່າຍໃສ່ໃບລານ ແລະພິມເປັນອັກສອນໄທ-ອັກສອນລາວ ສືບຕໍ່ກັນມາຫຼາຍຄັ້ງຫຼາຍທົບ ລາງສະບັບກໍມີຜູ່ແກ້ໄຂຕື່ມເຕີມໄປອີກກໍມີ ລາງສະບັບ ກໍຂຽນຜິດ ໂດຍຄວາມເຂົ້າໃຈຜິດ ຫຼືບໍ່ຮູ້ທີ່ມາຂອງສັບທີ່ເພິ່ນຂຽນໄວ້ແຕ່ເດີມ ເລີຍແກ້ຄຳເວົ້າອັນຖືກຕ້ອງຂອງຜູ່ແຕ່ງ ໄປຕາມຄວາມຮູ້ຄວາມເຂົ້າໃຈຂອງຕົນກໍມີ ດັ່ງຄຳວ່າ "ຂວບເມື່ອ ພໍຣະມີເຕົ້າ ສະຖຽນເນົາໃນເມດ" ມີຜູ່ຂຽນເປັນ "ທໍຣະນີເຕົ້າ ສະຖຽນເນົາໃນເມດ" ກໍມີ ເພາະບໍ່ຮູ້ຄຳວ່າ ພໍຣະນີ ອັນເປັນຊື່ຂອງດາວລືກໝູ່ໜຶ່ງປະຈຳຢູ່ໃນລາສີເມດເປັນຕົ້ນ.

ດ້ວຍເຫດດັ່ງກ່າວມານີ້ ຂ້າພະເຈົ້າຈຶ່ງໄດ້ພາກພຽນອ່ານໜັງສືເລື່ອງນີ້ເບິ່ງຫຼາຍສະບັບຫຼາຍຜູກທຽບຄຽງກັນ ສະບັບໜຶ່ງໄດ້ກ່າຍມາຈາກຈັງຫວັດອ່າງທອງ ອັນເປັນຈັງຫວັດພາກກາງໃນປະເທດໄທ ສະບັບໜຶ່ງໄດ້ກ່າຍຈາກສະບັບຂອງ ທ່ານທຍຸຍ ອະໄພ ເຊິ່ງເປັນສະບັບມູນມໍລະດົກຕົກທອດມາແຕ່ບິດາຂອງທ່ານ ໄດ້ເຫັນວ່າ ສອງສະບັບນີ້ມີຂໍ້ຄວາມບົດກອນຖືກຕ້ອງກັນ ຈຶ່ງໄດ້ແກ້ໄຂເອົາຕາມສະບັບຂອງທ່ານທຍຸຍ ອະໄພ ແລະ ກໍເຄີຍໄດ້ພິມເປັນເຫຼັ້ມມາຫຼາຍເທື່ອແລ້ວ ແຕ່ຫາກຍັງບໍ່ທັນຮຽບຮ້ອຍດີ ເນື່ອງຈາກລາງສະບັບກໍຂຽນດ້ວຍມື ລາງສະບັບ ກໍພິມດ້ວຍພິມດີດແລ້ວອັດໂລນຽວ ແລະຫຍິບເປັນເຫຼັ້ມດ້ວຍມືເອົາ ທັງຕົວໜັງສື ແລະປຶ້ມ ຈຶ່ງບໍ່ໄດ້ມາດຕະຖານ ແລະການພິມກໍຍັງຂາດຕົກບົກເບົາຢູ່ເປັນອັນມາກ.

ມາບັດນີ້ ທ່ານລັດຖະມົນຕີ ວ່າການກະຊວງທຳມະການ ຄື ເຈົ້າບຸນອ້ອມ ນະຈຳປາສັກ ໄດ້ເຫັນຄວາມສຳຄັນຂອງໜັງສືຄຳກອນເລື່ອງທ້າວສັງສິນໄຊ ນີ້ວ່າ ເປັນວັນນະຄະດີຊັ້ນຍອດຂອງລາວ ຄວນຈະຈັດການກວດກາແກ້ໄຂໃຫ້ຖືກຕ້ອງ ແລ້ວຈັດພິມເປັນເຫຼັ້ມໃຫ້ໄດ້ມາດຕະຖານຂຶ້ນໄວ້ ເພື່ອໃຫ້ເປັນສົມບັດຂອງຊາດລາວສືບໄປ ຈຶ່ງໄດ້ສັ່ງໃຫ້ຂ້າພະເຈົ້າກວດກາຕື່ມ ແລ້ວຈັດພິມຂຶ້ນໂດຍນາມຂອງກະຊວງທຳມະການ ດ້ວຍປະການດັ່ງນີ້.

ວຽງຈັນ ວັນທີ ກັນຍາ 2512

*ສີລາ ວີຣະວົງ*

# ຊີວະປະຫວັດຂອງຜູ້ລິດຈະນາ

ມະຫາສິລາ ວີຣະວົງ ເຖິງແກ່ມໍລະນະກຳວັນທີ 18 ກຸມພາ 1987 ລວມອາຍຸໄດ້ 82 ປີ ນັບເປັນການສູນເສຽເສົາຄ້ຳທີ່ຫົດແທນໄດ້ຍາກ ຂອງວົງການຄົ້ນຄວ້າໃນປະເທດລາວ. ທ່ານ ສີຊະນະ ສີສານ ປະທານຄະນະກຳມະການ ວິທະຍາສາດສັງຄົມແຫ່ງຊາດລາວ ຂຽນໄວ້ວ່າ:

" ຕະຫຼອດຊີວິດຂອງທ່ານ ມະຫາສິລາ ວີຣະວົງ ໄດ້ອຸທິດຕົນໃຫ້ແກ່ການຄົ້ນຄວ້າພາສາ, ວັນນະຄະດີ, ປະຫວັດສາດ ແລະ ຍັງເປັນຫ່ວງໃຍ ຈົນເຖິງວາລະສຸດທ້າຍຂອງທ່ານ ດ້ວຍຢາກໃຫ້ ວັນນະຄະດີລາວສະໄໝບູຮານ ໄດ້ຮັບການພິມອອກເຜີຍແຜ່ຕໍ່ມວນຊົນຢ່າງ ທົ່ວເຖິງ. ບັນດານັກສຶກສາ, ນັກຄົ້ນຄວ້າ ທັງລາວ ແລະ ຕ່າງປະເທດ ຕ່າງກໍຖືເອົາທ່ານ ເປັນບ່ອນອີງ ເພື່ອຖາມເອົາຂໍ້ມູນ, ຫຼາຍໆຄົນຍົກຍ້ອງ ແລະ ນັບຖືທ່ານເປັນອາຈານ ເປັນຜູ້ຊົງຄຸນວຸດທິ ເປັນນັກປາດຜູ້ໜຶ່ງ ຂອງລາວ ... "

ມະຫາສິລາ ກາຍເປັນບຸກຄົນໃນຕຳນານ ຊຶ່ງປະຊາຊົນຢູ່ຕາມລຽບສອງຝັ່ງແມ່ນ້ຳຂອງ ເລົ່າຂານກັນມາ ຜົນງານຂອງເພິ່ນແຜ່ຫຼາຍໃນທົ່ວປະເທດ ແລະ ຈຳນວນບໍ່ໜ້ອຍ ກະຈັດກະຈາຍ ຢູ່ທາງພາກອີສານຂອງປະເທດໄທ. ດັ່ງນັ້ນ ເພື່ອເປັນການແລກປ່ຽນຂໍ້ມູນ ແລະ ທັດສະນະຕ່າງໆ ກ່ຽວກັບທ່ານຜູ້ນີ້ ຈຶ່ງມີການສຳມະນາລະຫວ່າງ ນັກວິຊາການຈາກສອງຝັ່ງຂອງ ເມື່ອວັນທີ 28 ເມສາ 1990 ທີ່ນະຄອນວຽງຈັນ. ນັບເປັນການແລກປ່ຽນຄວາມຄິດຄວາມເຫັນ ໃນຫຼາຍແງ່ມຸມ ເພາະມະຫາສິລາ ເປັນທັງນັກອັກສອນສາດ, ນັກພາສາ, ນັກວັນນະຄະດີ, ນັກກະວີ, ນັກປະຫວັດສາດ, ນັກໂຫຣາສາດ ແລະ ນັກເຄື່ອນໄຫວຕໍ່ສູ້ເພື່ອເອກະລາດຂອງລາວ ໃນຊຸມປີ 1940.

ມະຫາສິລາ ເກີດເມື່ອວັນທີ 1 ສິງຫາ 1905 ທີ່ບ້ານໜອງໝື່ນຖ່ານ ເມືອງອາດສາມາດ ຈັງຫວັດຮ້ອຍເອັດ ປະເທດໄທ ເປັນບຸດຄົນທີ 4 ໃນຈຳນວນ 9 ຄົນ ຂອງທິດເສນ ແລະ ນາງດາ ຊຶ່ງເປັນຄອບຄົວຊາວນາ ທີ່ສືບເຊື້ອສາຍມາຈາກ ພະຍາເມືອງປາກ ຜູ້ເປັນປູ່ທວດ. ພະຍາ ເມືອງປາກ ເປັນຕົ້ນຕະກຸນທີ່ໄປຈາກນະຄອນຈຳປາສັກ.

ໃນປະຖົມໄວ ທ່ານບວດເປັນຈົວ ຈຶ່ງໄດ້ຮຽນໜັງສືຕົວທໍາ, ຕົວຂອມ, ຕົວໄທ ແລະ ຕົວລາວ ສະຫຼັບດ້ວຍການຮຽນທາງໂລກ ຄື ໂຮງຮຽນປະຖົມ ເມື່ອໃຫຍ່ມາ ກໍໄປຮຽນຕໍ່ທີ່ກຸງເທບ ໂດຍຢູ່ໃນສະມະນະເພດ ຈົນສໍາເລັດມະຫາຫ້າປະໂຫຍກ ໃນປີ 1928.

ປີ 1930 ທ່ານເດີນທາງມາວຽງຈັນ ໃນຊຸດຜ້າເຫຼືອງ ບໍ່ຮອດປີກໍສິກ ແລ້ວເຂົ້າເຮັດການເປັນສະໝຽນນໍາເຈົ້າມະຫາອຸປະຮາດເພັດຊະລາດ, ຕອນນັ້ນເຈົ້າເພັດຊະລາດ ດໍາລົງຕໍາແໜ່ງເປັນສາລະວັດກວດການແຜ່ນດິນລາວ ທັງເປັນຜູ່ຮັບຜິດຊອບຟື້ນຟູວັດທະນະທໍາລາວ ໂດຍສະເພາະການສຶກສາພຸດທະສາສະໜາ ດ້ວຍການອຸປະຖໍາຂອງ (EFEO) ສໍານັກສຶກສາຝຣັ່ງ ພາກບູລະພາ.

ປີ 1931 ມະຫາສີລາ ໄດ້ຮັບໜ້າທີ່ເປັນອາຈານສອນພາສາບາລີ ຢູ່ໂຮງຮຽນບາລີທີ່ຂຶ້ນກັບພຸດທະບັນດິດສະພາຈັນທະບູລີ ອັນເປັນສະຖາບັນແຫ່ງທໍາອິດຂອງປະເທດລາວ, ທໍາອິດແມ່ນມະຫາແກ້ວ ເປັນອາຈານສອນບາລີ, ຕໍ່ມາແມ່ນມະຫາຮັກ ມີວັນດີດ (ປັດຈຸບັນເປັນເຈົ້າອາວາດວັດສີເມືອງ ຈັງຫວັດໜອງຄາຍປະເທດໄທ). ເມື່ອທັງສອງທ່ານນີ້ລາອອກແລ້ວ ມະຫາສີລາກໍໄດ້ຮັບໜ້າທີ່ແທນ.

24 / VII

ລະຫວ່າງປີ 1931-1940 ທ່ານໄດ້ແຕ່ງຕໍາລາຮຽນພາສາບາລີ, ຊໍາລະແກ້ໄຂໜັງສືສູດມົນ ແລະ ຕໍາລາຕ່າງໆ ສໍາລັບພະສົງສາມະເນນ ຂຽນໄວຍາກອນລາວພາກຕົ້ນ ທີ່ມີຕົວອັກສອນຄົບສໍາລັບຂຽນພາສາບາລີໄດ້ ແລະ ຊໍາລະໜັງສືເກົ່າແກ່ຈາກໃບລານຫຼາຍເລື່ອງ.

ຫ້ານຈໍາໜ່າຍ

ປີ 1940 ເປັນໄລຍະຕົ້ນຂອງສົງຄາມໂລກຄັ້ງທີ 2 ເກີດຂະບວນການຕໍ່ສູ້ຂອງປະຊາຊົນລາວເພື່ອຍາດເອົາເອກະລາດຈາກຝຣັ່ງ ມະຫາສີລາ ໄດ້ເຂົ້າຮ່ວມເຄື່ອນໄຫວຢ່າງຫ້າວຫັນ ແລະ ມາຮອດປີ 1941 ກໍຕ້ອງຫຼົບໜີໄປປະເທດໄທ ເພາະອໍານາດການປົກຄອງຝຣັ່ງນໍາຈັບຕົວ.

ປີ 1945 ທ່ານກັບຄືນມາຈາກປະເທດໄທ ເພື່ອຮ່ວມກັບຂະບວນລາວອິດສະຫຼະ ທໍາການປະກາດເອກະລາດລາວ ໃນວັນທີ 12 ຕຸລາ 1945. ເມື່ອຕັ້ງລັດຖະບານລາວອິດສະຫຼະຂຶ້ນແລ້ວ ທ່ານກໍໄດ້ຮັບກຽດເປັນທີ່ປຶກສາລັດຖະບານ ແລະ ເປັນຜູ່ໜຶ່ງ ທີ່ຮ່ວມອອກແບບທຸງພະຈັນເພັງ ອັນກາຍມາເປັນ ທຸງຊາດໃນປັດຈຸບັນ.

ປີ 1946 ຝຣັ່ງຄືນມາຍຶດເອົາລາວ ຈຳເປັນລັດຖະບານລາວອິດສະຫຼະ ຕ້ອງຫຼົບໜີໄປຢູ່ໄທ, ມະຫາສິລາ ກໍໄປນຳຂະບວນດ້ວຍເພື່ອຄວາມປອດໄພ ຈົນຮອດປີ 1948 ຈຶ່ງໄດ້ກັບມາລາວ ແລ້ວເຂົ້າເຮັດການຢູ່ສະພາຜູ້ແທນລາສະດອນ. ຕໍ່ມາ ທ່ານຍ້າຍໄປຢູ່ກະຊວງທຳມະການ ແລະໃນປີ 1952 ກໍຍ້າຍໄປເປັນຫົວໜ້າກອງວັນນະຄະດີ ກະຊວງສຶກສາທິການ ທັງເປັນກຳມະການ ແລະ ເລຂານຸການຄະນະກຳມະການວັນນະຄະດີ. ຕໍ່ມາ ຄະນະກຳມະການນີ້ ກໍໄດ້ຮັບການຍົກຂຶ້ນເປັນລາຊະບັນດິດສະພາລາວ. ທ່ານຮັບລາຊະການມາຈົນຮອດປີ 1963 ກໍອອກກິນເບັ້ຽບຳນານ.

ຜົນງານທີ່ສຳຄັນມີ: ໄວຍາກອນພາສາບາລີ, ໄວຍາກອນພາສາລາວ, ວັດຈະນານຸກົມພາສາລາວ, ປະຫວັດສາດລາວ, ປະຫວັດໜັງສືລາວ, ທ້າວຮຸ່ງທ້າວເຈືອງ, ນາງຕັນໄຕ, ສັງສິນໄຊ ໆລໆ. ສະເພາະປຶ້ມປະຫວັດສາດລາວຫົວນີ້ ເປັນຜົນງານການຄົ້ນຄວ້າທາງປະຫວັດສາດທີ່ເປັນເສົາຫຼັກ ແລະ ເປັນບ່ອນອີງຂອງນັກຄົ້ນຄວ້າທັງລາວ ແລະ ຕ່າງປະເທດໃນປັດຈຸບັນ. ມະຫາວິທະຍາໄລຊຽງໃໝ່ ກໍໄດ້ແປ ແລະ ພິມເຜີຍແຜ່ເພື່ອປະໂຫຍດທາງການສຶກສາ ສຳລັບນັກການສຶກສາ, ນັກວິໄຈ ຕະຫຼອດທັງຜູ້ສົນໃຈທົ່ວໄປ.

*ຮຽບຮຽງໂດຍ ອຸທິນ ບຸນຍາວົງ*









ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
ປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ມອບຫຼຽນ

## ນາມມະຍົດ ສິລະປິນ ແຫ່ງຊາດ

ສາຂາ ...ວັນນະກຳ...

ໃຫ້ທ່ານ .ທ່ານ.ມະຫາ.ສີລາ.ວີລະວົງ...

ລັດຖະດຳລັດສະບັບເລກທີ່ ...146 /ປປທ ລົງວັນທີ 23/ 06/ 2010 ນະຄອນຫຼວງວຽງຈັນ, ວັນທີ 28 ເດືອນ 06 ປີ 2010

ລົງທະບຽນເລກທີ ...21...

ປະທານປະເທດ ແຫ່ງ ສ.ປ.ປ. ລາວ

ຈູມມາລີ ໄຊຍະສອນ

# *ເຫດການສຳຄັນໃນຊີວິດ ຂອງ ມະຫາສີລາ ວີຣະວົງ*

*ຊາຕະ:* ວັນທີ 1 ສິງຫາ ຄ.ສ.1905 ວັນອັງຄານ ຂຶ້ນ 1 ຄ່ຳ ເດືອນເກົ້າ ປີມະເສັງ ພ.ສ. 2448 ເວລາ 12.30ໂມງ ທີ່ບ້ານໜອງໝື່ນຖ່ານ ອຳເພີອາດສາມາດ ຈັງຫວັດຮ້ອຍເອັດ ປະເທດສະຫຍາມ (ໄທ)

*ມໍລະນະ:* ວັນພຸດ ທີ 18 ກຸມພາ ຄ.ສ. 1987 ກົງກັບວັນແຮມ 5 ຄ່ຳ ເດືອນສາມ ປີເຖາະ ພ.ສ. 2530 ທີ່ບ້ານນາຄຳທ່ຽງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ຣວມອາຍຸ 82 ປີ

1912-14 (ອາຍຸ 8-10 ປີ): ອ່ານໜັງສືລາວບູຮານນຳພໍ່ຕູ້ຢູ່ເຮືອນໄດ້ ໂດຍອ່ານຈາກໃບລານໂລດ ເລົ່າຄຳກອນເລື່ອງຈຳປາສີ່ຕົ້ນ ກາບພະມຸນີ ແລະອື່ນໆໄດ້ກັບປາກ ໄປເປັນສັງກະລີຢູ່ວັດ ຮຽນໜັງສືທັມ ເລກແບບບູຮານ ແລະ ຮຽນອັກສອນໄທ

1915- (ອາຍຸ11-12) ບວດຈົວ ອ່ານໜັງສືລາວ ໜັງສືທັມ, ໜັງສືໄທຍ ແລະຂອມ.

1916 ສິກອອກມາແລ້ວ ຈຶ່ງກັບໄປບວດຄືນ ຕອນອາຍຸ 15 ປີ

1922 (ພ.ສ. 2465 ອາຍຸ 17 ປີ) ບວດຈົວ ຮຽນນັກທັມຊັ້ນໂທ ແລະໄວຍາກອນບາລີ ຢູ່ເມືອງອຸບົນ ທີ່ວັດສີທອງ.

1924-26 (ພ.ສ. 2467-2469, ອາຍຸ 19-21) ບວດເປັນພິກຂຸ ທີ່ວັດປະທຸມວະນາຣາມ, ສອບໄດ້ມະຫາ 5 ປະໂຫຍກ ທີ່ວັດປະທຸມວະນາຣາມ ກຸງເທບມະຫານະຄອນ ຣາຊະອານາຈັກສະຫຍາມ (ປີ ຄ.ສ.1928)

1927-28 (ພ.ສ. 2470-71) ຂຶ້ນມາຢາມແມ່ ແລະມາເປັນຄູສອນປາລີ ໄວຍາກອນ ທີ່ວັດບຶງພະລານໄຊ ເມືອງຮ້ອຍເອັດ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ